**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 146 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 6-06-໒໐໐໕

# ດຳລັດ

## ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/99/ສພຊ; ລົງວັນທີ 03 ເມສາ 1999;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 01/96 ລົງວັນທີ 11 ຕຸລາ 1996;
- ອີງຕາມ ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 02/96 ລົງວັນທີ 11 ຕຸລາ 1996;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 1108/ອວຕສ-ສນຍ, ລົງວັນທີ 31/05/05 ຂອງ ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງຂອງດຳລັດ.**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ແນໃສ່ສະໜອງທຶນໃຫ້ແກ່ບັນດາກິດຈະການ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາ

ກອນທຳມະຊາດ ແບບຍືນຍົງ ໂດຍສະເພາະ ການຄຸ້ມຄອງຊີວະນາໆພັນ ແລະ ການພັດທະນາຊຸມຊົນ ຢູ່ໃນ ສປປ ລາວ.

**ມາດຕາ 2. ນິຍາມຄຳສັບ.**

ໃນດຳລັດສະບັບນີ້ ຄຳສັບຕໍ່ໄປລຸ່ມນີ້ ມີຄວາມໝາຍດັ່ງນີ້:

"ກປສ" ໝາຍເຖິງ ກອງທຶນປົກປັກຮັກສາ ສິ່ງແວດລ້ອມ;

"ກິດຈະການ" ແມ່ນໝາຍເຖິງ ການເຄື່ອນໄຫວທາງດ້ານສິ່ງແວດລ້ອມ ທີ່ມີເງື່ອນໄຂຖືກຕ້ອງກັບຫລັກການໃຫ້ທຶນຂອງ ກປສ;

"ແຜນການປະຈຳປີ" ໝາຍເຖິງແຜນການດຳເນີນງານປະຈຳປີ ແລະ ແຜນການລາຍຮັບ-ລາຍຈ່າຍປະຈຳປີ;

"ແຜນງານປະຈຳປີ" ໝາຍເຖິງ ແຜນການດຳເນີນວຽກງານປະຈຳປີ ຂອງ ກປສ ຕາມທີ່ໄດ້ຮັບການຮັບຮອງເອົາຈາກສະພາບໍລິຫານ ແລະ ມີການດັດແກ້ເປັນແຕ່ລະໄລຍະ;

"ສະພາບໍລິຫານ" ໝາຍເຖິງສະພາບໍລິຫານຂອງ ກປສ;

"ປະທານ" ໝາຍເຖິງ ປະທານສະພາບໍລິຫານຂອງ ກປສ;

"ລະບຽບການຄຸ້ມຄອງ" ໝາຍເຖິງລະບຽບ ຂອງ ກປສ ຕາມທີ່ໄດ້ຮັບການຮັບຮອງເອົາຈາກສະພາບໍລິຫານ ແລະ ມີການດັດແກ້ເປັນແຕ່ລະໄລຍະ;

"ຫົວໜ່ວຍທຸລະກິດ" ໝາຍເຖິງລັດວິສະຫະກິດ ແລະ ວິສະຫະກິດເອກະຊົນ ທີ່ຈົດທະບຽນໃນ ສປປລາວ;

"ຜູ້ອຳນວຍການ" ໝາຍເຖິງຜູ້ອຳນວຍການຫ້ອງການບໍລິຫານ ກປສ ຕາມທີ່ໄດ້ຮັບການແຕ່ງຕັ້ງຈາກສະພາບໍລິຫານ;

" ຫ້ອງການ " ຫ້ອງການບໍລິຫານຂອງ ກປສ.

"ຜູ້ມີສິດຂໍທຶນ" ໝາຍເຖິງ ຜູ້ຍື່ນສະເໜີຂໍທຶນຮອນໃຫ້ແກ່ກິດຈະການ.

"ຄູ່ມືການຄຸ້ມຄອງບໍລິຫານ ແລະ ການເງິນ" ໝາຍເຖິງ ຄູ່ມື ອະທິບາຍລາຍລະອຽດດ້ານການບໍລິຫານ ແລະ ການເງິນ ຕາມທີ່ໄດ້ຮັບການຮັບຮອງເອົາຈາກສະພາບໍລິຫານ ແລະ ມີການດັດແກ້ເປັນແຕ່ລະໄລຍະ;

"ອົງການຈັດຕັ້ງຂອງລັດ" ໝາຍເຖິງ ອົງການ ແລະ ສະຖາບັນຂອງລັດຖະບານ, ສະຖາບັນການສຶກສາ ແລະ ສະຖາບັນຄົ້ນຄວ້າ, ອົງການ ແລະສະຖາບັນຕ່າງໆ ຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ;

"ຄູ່ມືຂອງ ກປສ" ໝາຍເຖິງ ຄູ່ມືດ້ານການເງິນແລະການຄຸ້ມຄອງບໍລິຫານ ແລະ ຄູ່ມືດ້ານການເຄື່ອນໄຫວວຽກງານ;

**ມາດຕາ 3. ຈຸດປະສົງຂອງການສ້າງຕັ້ງ ກປສ.**

ຈຸດປະສົງຂອງການສ້າງຕັ້ງ ກປສ ມີດັ່ງນີ້ :

(1) ຈັດຕັ້ງປະຕິບັດ (i) ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ພາກທີ V; (ii) ກົດໝາຍ ວ່າດ້ວຍປ່າໄມ້, ມາດຕາ 47; (iii) ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ມາດຕາ 15;

(2). ສະໜອງທຶນໃຫ້ແກ່ການຈັດຕັ້ງປະຕິບັດ ບັນດາກິດຈະການ ທີ່ສອດຄ່ອງກັບດຳລັດສະບັບນີ້ ແລະ ບັນດານະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນການດ້ານສິ່ງແວດລ້ອມ ຂອງລັດຖະບານ ແຫ່ງ ສປປ ລາວ;

(3) ສົ່ງເສີມວຽກງານຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ລວມທັງ (i) ການສ້າງຄວາມ ອາດສາມາດ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ການປົກປັກຮັກສາ ສິ່ງແວດ ລ້ອມ; (ii) ການຕິດຕາມກວດກາບັນດາກິດຈະການ ແລະ ໂຄງການພັດທະນາທີ່ມີຜົນກະ ທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; (iii) ການສ້າງ ແລະ ຈັດຕັ້ງປະຕິບັດແຜນການ ວ່າດ້ວຍການຄຸ້ມຄອງຊັບພະຍາກອນແບບຄົບຊຸດ; (iv) ການປົກປັກຮັກສາ ແລະ ນຳໃຊ້ ຊີວະນາໆພັນແບບຍືນຍົງ; (v) ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ; ແລະ (vi) ນຳໃຊ້ມາດຕະການເພື່ອເຮັດໃຫ້ເຈົ້າຂອງໂຄງການພັດທະນາ ຈັດຕັ້ງປະຕິບັດວຽກງານຫລຸດ ຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງແທດເໝາະ;

(4) ຮັບປະກັນໃຫ້ບັນດາວຽກງານ ທີ່ໄດ້ຮັບການສະໜອງທຶນຈາກ ກປສ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ, ມີຄວາມໂປ່ງໃສ, ສອດຄ່ອງກັບມາດຕະຖານທາງດ້ານເຕັກນິກການ ອອກແບບທີ່ເຫມາະສົມ ແລະ ມີປະສິດທິພາບ;

(5) ດຳເນີນວຽກງານ ກປສ ໂດຍອີງໃສ່ຫລັກການກ່ຽວກັບການປະສານງານກັບບັນດາພາກ ສ່ວນທີ່ກ່ຽວຂ້ອງ ທີ່ຢູ່ໃນຂົງເຂດການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະ ຍາກອນທຳມະຊາດ, ແລະ ການພັດທະນາຊຸມຊົນ;

(6) ດຳເນີນວຽກງານ ໂດຍມີການຄົ້ນຄວ້າແຜນການລົງທຶນຂອງລັດ ແລະ ຂອງກອງທຶນອື່ນໆ ໂດຍມີການປະສານງານ ແລະ ສະໜອງທຶນຮອມເພີ່ມເຕີມ ເພື່ອຊຸກຍູ້ວຽກງານທີ່ກ່ຽວຂ້ອງ ກຳນົດເວລາທີ່ແທດເຫມາະ;

(7) ຄຸ້ມຄອງ ແລະ ນຳເອົາຊັບສິນຂອງ ກປສ ໄປລົງທຶນ ເພື່ອເພີ່ມລາຍຮັບ, ຮັບປະກັນ ປະສິດທິພາບ ແລະ ການສະໜອງທຶນໃນໄລຍະຍາວ, ແລະ ເຮັດໃຫ້ ກປສ ມີຄວາມ ຍືນຍົງ ໃນການເຄື່ອນໄຫວວຽກງານຂອງຕົນ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ ກປສ.

## ໝວດທີ II
## ທີ່ຕັ້ງ ແລະ ໜ້າທີ່ ຂອງ ກປສ.

### ມາດຕາ 4 ທີ່ຕັ້ງ ຂອງ ກປສ.

ກປສ ເປັນອົງການຈັດຕັ້ງທີ່ມີຄວາມເປັນເອກະລາດ ທາງດ້ານການເງິນ ແລະ ການຄຸ້ມຄອງ ບໍລິຫານ ແລະ ເຄື່ອນໄຫວວຽກງານ ພາຍໃຕ້ລະບຽບກົດຫມາຍຂອງ ສປປ ລາວ.

**ມາດຕາ 5. ໜ້າທີ່ຂອງ ກປສ.**

ກປສ ມີໜ້າທີ່ເຄື່ອນໄຫວວຽກງານພາຍໃຕ້ກົດລະບຽບຂອງກອງທຶນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງລັດ ເພື່ອໃຫ້ບັນລຸໄດ້ຕາມຈຸດປະສົງຂອງການສ້າງຕັ້ງ ກປສ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 3 ຂອງດຳລັດສະບັບນີ້.

## ໝວດທີ III
## ການຈັດຕັ້ງຂອງ ກປສ

**ມາດຕາ 6. ໂຄງປະກອບການຈັດຕັ້ງຂອງ ກປສ.**

ກປສ ປະກອບດ້ວຍ:

(1) ສະພາບໍລິຫານ;

(2) ຫ້ອງການບໍລິຫານຂອງກອງທຶນ.

**ມາດຕາ 7. ສະພາບໍລິຫານ.**

(1) ສະພາບໍລິຫານ ມີພາລະບົດບາດຮັບຜິດຊອບລວມ ໃນການຊຸກຍູ້ ການຈັດຕັ້ງວຽກງານ ໃຫ້ບັນລຸຕາມຈຸດປະສົງຂອງ ກປສ ລວມທັງ (i) ການກຳນົດນະໂຍບາຍ, ຍຸດທະສາດ ແລະ ບູລິມະສິດຂອງ ກປສ; ແລະ (ii) ຊີ້ນຳ ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງຫ້ອງການ ເພື່ອຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ ແລະ ວຽກງານຂອງຕົນໃຫ້ມີປະສິດທິຜົນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນດຳລັດສະບັບນີ້ ແລະ ລະບຽບການການຄຸ້ມຄອງ.

(2) ສະພາບໍລິຫານຂອງ ກປສ ປະກອບດ້ວຍຜູ້ຕາງໜ້າ ຂອງການຈັດຕັ້ງດັ່ງຕໍ່ໄປນີ້:

| | |
|---|---|
| • ຮອງນາຍົກລັດຖະມົນຕີ | ປະທານ |
| • ລັດຖະມົນຕີວ່າການ ກະຊວງການເງິນ | ຮອງປະທານ |
| • ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອວຕສ | ຮອງປະທານ |
| • ຜູ້ຕາງໜ້າຈາກກະຊວງ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ | ສະມາຊິກ |
| • ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດ | ສະມາຊິກ |
| • ຜູ້ຕາງໜ້າ ອຳນາດການປົກຄອງທ້ອງຖິ່ນ | ສະມາຊິກ |
| • ຜູ້ຕາງໜ້າ ສະພາການຄ້າ ແລະ ອຸດສາຫະກຳ | ສະມາຊິກ |
| • ຜູ້ຕາງໜ້າ ພາກສ່ວນເອກະຊົນ ໃນຂະແໜງການຄ້າ ແລະ ອຸດສາຫະກຳ | ສະມາຊິກ |
| • ຜູ້ຕາງໜ້າ ຈາກສະຖາບັນຄົ້ນຄວ້າ ຫລື ອົງການຈັດຕັ້ງສັງຄົມ | ສະມາຊິກ |

(3). ຜູ້ຕາງໜ້າຂອງອົງການຈັດຕັ້ງ ທີ່ປະກອບຢູ່ໃນສະພາບໍລິຫານຂອງ ກປສ ຕ້ອງ:

- ຈັດຕັ້ງປະຕິບັດວຽກງານ ຕາມຈຸດປະສົງ ແລະ ສິດໜ້າທີ່ ຂອງ ກປສ;
- ສືບຕໍ່ເປັນພະນັກງານ ທີ່ເປັນຕົວແທນ ແລະ ຢູ່ຕໍາແໜ່ງໃນການຈັດຕັ້ງທີ່ກ່ຽວຂ້ອງ;

(4) ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງສະພາບໍລິຫານ ຕາມການສະເໜີຂອງກະຊວງການເງິນ ໂດຍມີການປຶກສາຫາລື ກັບ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ.**

ສິດ ແລະ ໜ້າທີ່ຂອງສະພາບໍລິຫານ ມີດັ່ງນີ້ :

(1) ກໍານົດນະໂຍບາຍ ແລະ ໃຫ້ທິດຊີ້ນໍາກ່ຽວກັບການຄຸ້ມຄອງບໍລິຫານ ຫ້ອງການບໍລິຫານຂອງ ກປສ ເພື່ອຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງ ກປສ;

(2) ກໍານົດນະໂຍບາຍກ່ຽວກັບການຄັດເລືອກພະນັກງານ ແລະ ຄ່າແຮງງານ ເພື່ອຮັບປະກັນ ປະສິດທິຜົນ ຂອງການເຄື່ອນໄຫວວຽກງານ ຂອງຫ້ອງການບໍລິຫານຂອງ ກປສ;

(3) ຄັດເລືອກ, ວ່າຈ້າງ, ແຕ່ງຕັ້ງ ແລະ ຍົກເລີກສັນຍາ ກັບຜູ້ອໍານວຍການເມື່ອເຫັນວ່າເໝາະສົມ;

(4) ຊີ້ນໍາຫ້ອງການ ໃນການກະກຽມ ແລະ ສະເໜີເອກະສານລຸ່ມນີ້ ເພື່ອໃຫ້ສະພາບໍລິຫານຮັບຮອງເອົາ :

- ແຜນຍຸດທະສາດໄລຍະ 5 ປີ ຂອງ ກປສ.
- ຄູ່ມືການເຄື່ອນໄຫວວຽກງານຂອງ ກປສ.
- ແຜນງານປະຈໍາປີຂອງ ກປສ.
- ບົດລາຍງານປະຈໍາໄຕມາດ ແລະ ປະຈໍາປີ ກ່ຽວກັບວຽກງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ກປສ.
- ຄັດເລືອກບໍລິສັດຄຸ້ມຄອງບໍລິຫານຊັບສິນ ຫລື ທະນາຄານທຸລະກິດ ເພື່ອຄຸ້ມຄອງທຶນຮອນ ທີ່ບໍ່ທັນໄດ້ ເບີກຖອນຂອງ ກປສ.
- ລະບຽບການຄຸ້ມຄອງ ກປສ.
- ລະບຽບຂອງສະພາບໍລິຫານ.
- ລະບຽບຂອງຫ້ອງການ.

(5) ກໍານົດນະໂຍບາຍ ກ່ຽວກັບການລົງທຶນ ແລະ ອອກບົດແນະນໍາໃນການຄຸ້ມຄອງບໍລິຫານທຶນ ເພື່ອສະເໜີ ແລະ ເຮັດສັນຍາກັບບໍລິສັດຄຸ້ມຄອງບໍລິຫານຊັບສິນ ຫລື ທະນາຄານທຸລະກິດ.

(6) ຮັບຮອງ ຫລື ປະຕິເສດຄໍາຮ້ອງຂໍທຶນຮອນ ທີ່ສະເໜີຕໍ່ ກປສ ຫລັງຈາກຫ້ອງການບໍລິຫານ ກປສ ໄດ້ສຶກສາຄົ້ນຄວ້າ ແລະ ໄດ້ຮັບຄໍາເຫັນຂອງຜູ້ອໍານວຍການແລ້ວ. ສະພາບໍລິຫານ ອາດຈະມອບສິດໃນການຕັດສິນບັນຫາ ໃຫ້ແກ່ຜູ້ອໍານວຍການຕາມຄວາມເໝາະສົມ.

(7) ລະດົມການປະກອບສ່ວນທຶນຮອນເພີ່ມເຕີມ ໃຫ້ແກ່ ກປສ ຈາກຜູ້ສະໜອງທຶນຕ່າງໆ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

(8) ສະເໜີໃຫ້ກະຊວງການເງິນ ສ້າງຕັ້ງກອງທຶນຍ່ອຍ ຕາມທີ່ໄດ້ກຳນົດໄວ້ຢູ່ໃນດຳລັດສະບັບນີ້ ໃນເມື່ອເຫັນວ່າມີຄວາມເໝາະສົມ.

(9) ແຕ່ງຕັ້ງຄະນະກຳມະການໃດໜຶ່ງ ຈັດຕັ້ງປະຕິບັດວຽກງານສະເພາະ ຫລື ດຳເນີນການສຶກສາຄົ້ນຄວ້າວຽກງານ ໂດຍມີການກຳນົດເວລາຢ່າງຈະແຈ້ງ.

(10) ປະສານສົມທົບວຽກງານຂອງ ກປສ ກັບ ສຳນັກງານນາຍົກລັດຖະມົນຕີ, ກະຊວງການເງິນ, ຄະນະກຳມະການສິ່ງແວດລ້ອມແຫ່ງຊາດ ແລະ ບັນດາກະຊວງທີ່ກ່ຽວຂ້ອງ.

(12) ປະຕິບັດໜ້າທີ່ວຽກງານອື່ນ ທີ່ເຫັນວ່າຈຳເປັນ ເພື່ອຮັບປະກັນຜົນສຳເລັດ ແລະ ປະສິດທິຜົນ ໃນການຈັດຕັ້ງປະຕິບັດວຽກງານ ຕາມຈຸດປະສົງ ແລະ ໜ້າທີ່ວຽກງານຂອງ ກປສ.

(13) ກຳນົດເບ້ຍປະຊຸມຂອງສະພາບໍລິຫານ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຊຶ່ງພົວພັນກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃນນາມສະມາຊິກສະພາບໍລິຫານ. ສະມາຊິກສະພາບໍລິຫານຈະບໍ່ໄດ້ຮັບເງິນເດືອນ ຫລື ຄ່າແຮງງານຈາກ ກປສ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍປະຊຸມ.

**ມາດຕາ9 ສິດ ແລະ ໜ້າທີ່ຂອງປະທານສະພາບໍລິຫານ.**

ປະທານສະພາມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

(1) ຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດວຽກງານ ຂອງ ກປສ ໃຫ້ມີຜົນສຳເລັດຕາມຈຸດປະສົງຂອງກອງທຶນ, ປະທານ ຕ້ອງປະຕິບັດຕາມລະບຽບການຂອງ ກປສ, ເປັນປະທານກອງປະຊຸມສະພາບໍລິຫານ, ເປັນຕົວແທນ ແລະ ປະຕິບັດໜ້າທີ່ ກປສ ໃນລະຫວ່າງກອງປະຊຸມສະພາບໍລິຫານ;

(2) ມອບສິດຂອງຕົນໃຫ້ແກ່ຮອງປະທານ ເພື່ອປະຕິບັດໜ້າທີ່ແທນຕົນ ໃນເວລາຕິດຂັດວຽກງານ;

(3) ເຊີນຜູ້ຕາງໜ້າຂອງອົງການຈັດຕັ້ງອື່ນ ລວມທັງພາກລັດ ແລະ ເອກະຊົນ ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ໃນນາມເປັນຜູ້ສັງເກດການ ເມື່ອເຫັນວ່າມີຄວາມເໝາະສົມ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງຫ້ອງການບໍລິຫານ ກປສ.**

1. ເປັນເສນາທິການຊ່ວຍສະພາບໍລິຫານ ໃນການຄຸ້ມຄອງບໍລິຫານ ກປສ.
2. ສ້າງແຜນຍຸດທະສາດ 5 ປີ, ຄູ່ມືການຄຸ້ມຄອງ ບໍລິຫານ- ການເງິນ, ລະບຽບການ ແລະ ຄູ່ມືອື່ນໆ ເພື່ອສະເໜີສະພາບໍລິຫານຮັບຮອງ, ແລະ ປັບປຸງບັນດາເອກະສານເຫຼົ່ານີ້ ເປັນແຕ່ລະໄລຍະ;

3. ຮັບປະກັນໃຫ້ເງິນ ແລະ ການປະກອບສ່ວນທັງຫມົດທີ່ໄດ້ຮັບ ຖືກນຳໄປຝາກໄວ້ ໃນບັນຊີ ຂອງ ກປສ ຢູ່ທະນາຄານ ຕາມຈຸດປະສົງຂອງການສ້າງຕັ້ງກອງທຶນ;
4. ຈັດຕັ້ງປະຕິບັດວຽກງານຕາມຂັ້ນຕອນ ແລະ ລະບຽບການກ່ຽວກັບການຈັດຊື້, ການເຮັດສັນຍາ ແລະ ການເບີກຈ່າຍ ໂດຍສອດຄ່ອງກັບລະບຽບກົດຫມາຍຂອງ ສປປ ລາວ. ສຳລັບກອງທຶນຍ່ອຍ ແມ່ນຕ້ອງໄດ້ປະຕິບັດຕາມສັນຍາ ກັບອົງການຜູ້ໃຫ້ທຶນ ທີ່ໄດ້ສະຫນອງທຶນຮອນໃຫ້ແກ່ ກປສ;
5. ສ້າງແຜນລາຍຮັບ-ລາຍຈ່າຍປະຈຳປີ ເພື່ອສະເຫນີໃຫ້ສະພາບໍລິຫານພິຈາລະນາ ແລະ ສະເຫນີເຂົ້າແຜນງົບປະມານແຫ່ງລັດ ພ້ອມທັງກະກຽມບົດລາຍງານປະຈຳງວດ ແລະ ປະຈຳປີ;
6. ສ້າງ ແລະ ຮັກສາລະບົບຕິດຕາມບັນຊີ ແລະ ການບັນທຶກ ການເຄື່ອນໄຫວວຽກງານການເງິນ ຂອງ ກປສ;
7. ຮັບປະກັນປະສິດທິຜົນ, ຄວາມໂປ່ງໃສ ແລະ ປະເມີນບົດສະເຫນີໂຄງການທີ່ຍື່ນໃຫ້ ກປສ ໃຫ້ທັນກັບເວລາ;
8. ຕິດຕາມກວດກາ ແລະ ຮັບປະກັນປະສິດທິຜົນ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ໄດ້ຮັບການສະຫນັບສະຫນູນທຶນຮອນຈາກ ກປສ;
9. ຮັບປະກັນໃຫ້ບົດສະຫລຸບການເງິນ-ການບັນຊີ ແລະ ການເຄື່ອນໄຫວວຽກງານຂອງ ກປສ ໄດ້ກວດສອບໃນທຸກທ້າຍປີການເງິນ;
10. ສ້າງລະບຽບການຄຸ້ມຄອງບໍລິຫານ, ບັນດາຄູ່ມື ແລະ ເອກະສານຕ່າງໆຂອງ ກປສ ເພື່ອສະເຫນີໃຫ້ສະພາບໍລິຫານຮັບຮອງເອົາ, ໃນນັ້ນ :
    - ການເປີດ ແລະ ການເຄື່ອນໄຫວບັນຊີທະນາຄານ,
    - ຍຸດທະສາດການລົງທຶນ,
    - ການກຳນົດວຽກງານ ແລະ ເງື່ອນໄຂທີ່ສາມາດ ໄດ້ຮັບການສະຫນອງທຶນ ລວມທັງຮູບແບບ ການສະເຫນີຄຳຮ້ອງ, ການຍື່ນຄຳຮ້ອງ, ການຕີລາຄາປະເມີນຜົນ ແລະ ການຄັດເລືອກວຽກງານເພື່ອສະຫນອງທຶນ,
    - ການຈັດຕັ້ງປະຕິບັດວຽກງານ, ການຕິດຕາມກວດກາ ວຽກງານການເງິນ ຂອງວຽກງານ ທີ່ໄດ້ຮັບການສະຫນັບສະຫນູນທາງດ້ານທຶນຮອນຈາກ ກປສ,
    - ການຈັດຊື້ ແລະ ການເບີກຈ່າຍ ຂອງວຽກງານ ທີ່ໄດ້ຮັບການສະຫນັບສະຫນູນທາງດ້ານທຶນຮອນຈາກ ກປສ,
    - ການລາຍງານການຄັດເລືອກໂຄງການປະຈຳງວດ, ການເບີກຈ່າຍ, ວຽກງານຄຸ້ມຄອງ ກປສ ແລະ ຖານະທາງການເງິນຂອງ ກປສ,
    - ການສ້າງລະບົບ ແລະ ໂຄງສ້າງ ບົດລາຍງານປະຈຳປີ.

**ມາດຕາ 11 ສິດ ແລະ ຫນ້າທີ່ຂອງຜູ້ອຳນວຍການ.**

(1) ຮັບຜິດຊອບຕໍ່ສະພາບໍລິຫານ ໃນການຄຸ້ມຄອງວຽກງານປະຈຳວັນ ຂອງ ກປສ ຕາມນະໂຍບາຍລວມ, ປົດນຳໃນການເຄື່ອນໄຫວວຽກງານ, ການຊີ້ນຳສະເພາະຂອງສະພາບໍລິຫານ ແລະ ການຈັດຕັ້ງປະຕິບັດວຽກງານ ທີ່ນອນຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງຫ້ອງການບໍລິຫານ ກປສ;

(2) ເປັນພະນັກງານປະຈຳໃນຕຳແໜ່ງງານ ແລະ ມີຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານການດຳເນີນວຽກງານ ແລະ ການແກ້ໄຂບັນຫາວຽກງານຂອງ ກປສ ຢ່າງມີປະສິດທິຜົນ. ອາຍຸການຂອງຜູ້ອຳນວຍການ ແມ່ນ 3 ປີ ແລະ ສາມາດຕໍ່ໄດ້ຕາມການພິຈາລະນາຂອງ ສະພາບໍລິຫານ ໂດຍອີງຕາມປະສິດທິຜົນ ໃນການຈັດຕັ້ງປະຕິບັດວຽກງານ ຂອງຜູ້ກ່ຽວ;

(3) ເປັນຜູ້ຄັດເລືອກ, ວ່າຈ້າງ, ຊີ້ນຳ ແລະ ປົດພະນັກງານ ທີ່ເຫັນວ່າຈຳເປັນ ເພື່ອຮັບປະກັນຜົນສຳເລັດ ແລະ ປະສິດທິຜົນ ໃນການຄຸ້ມຄອງ ກປສ;

(4) ຫາກເຫັນວ່າມີຄວາມຈຳເປັນ ສາມາດຈະວ່າຈ້າງທີ່ປຶກສາທາງດ້ານເຕັກນິກ ເພື່ອປະຕິບັດໜ້າທີ່ໃດໜຶ່ງຂອງ ກປສ ຕາມການກຳນົດໄວ້ ຢູ່ໃນດຳລັດສະບັບນີ້ ເພື່ອເຮັດໃຫ້ຫ້ອງການ ສາມາດເຄື່ອນໄຫວວຽກງານຂອງຕົນໄດ້ຢ່າງມີປະສິດທິຜົນ. ສາມາດນຳໃຊ້ ການບໍລິການຂອງພະນັກງານ ຂອງອົງການຈັດຕັ້ງລັດ ຕາມການຕົກລົງກັບອົງການຈັດຕັ້ງດັ່ງກ່າວ ຫລື ຕາມເງື່ອນໄຂທີ່ສອງຝ່າຍຕົກລົງກັນ;

(5) ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ແລະ ປະຕິບັດໜ້າທີ່ເປັນເລຂາກອງປະຊຸມສະພາບໍລິຫານ, ແຕ່ບໍ່ສາມາດເປັນສະມາຊິກຂອງສະພາບໍລິຫານໄດ້.

(6) ຈັດຕັ້ງປະຕິບັດວຽກງານປະຈຳວັນ, ຄຸ້ມຄອງ ແລະບໍລິຫານ ກປສ ຕາມດຳລັດສະບັບ ນີ້, ລະບຽບການ ແລະ ຄູ່ມື ການຄຸ້ມຄອງບໍລິຫານ ກປສ;

(7) ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຫລື ຕາມການຊີ້ນຳຂອງສະພາບໍລິຫານ.

## ໝວດທີ IV

## ແຫລ່ງທຶນ ແລະ ລາຍຮັບຂອງ ກປສ

ມາດຕາ12 ແຫລ່ງທຶນ ແລະ ລາຍຮັບຂອງ ກປສ.

ແຫລ່ງທຶນ ແລະ ລາຍຮັບຂອງ ກປສ ໄດ້ມາຈາກ :

- ການຊ່ວຍເຫລືອລ້າ ແລະ ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ;
- ງົບປະມານຂອງລັດ;
- ໂຄງການພັດທະນາ ແລະ ກິດຈະການຕ່າງໆ;
- ການປະກອບສ່ວນຂອງພາກສ່ວນເສດຖະກິດ ແລະ ບຸກຄົນທົ່ວໄປ;
- ດອກເບ້ຍຫລື ຜົນກຳໄລ ທີ່ເກີດຈາກກອງທຶນ.

**ມາດຕາ 13 ການຍົກເວັ້ນພາສີ ອາກອນ.**

ແຫລ່ງທຶນ ແລະ ລາຍຮັບທັງໝົດຂອງ ກປສ ແມ່ນຖືກຍົກເວັ້ນຈາກອາກອນທັງໝົດ, ສ່ວນຄ່າທໍານຽມ, ພາສີອາກອນ ທີ່ຕິດພັນກັບລາຍຈ່າຍຂອງ ກປສ ລວມທັງອາກອນລາຍໄດ້ສ່ວນບຸກຄົນ ແມ່ນໃຫ້ປະຕິບັດຕາມກົດໝາຍພາສີ ແລະ ອາກອນ.

## ໝວດທີ V

## ການບໍລິຫານ ແລະ ການຄຸ້ມຄອງທຶນ

**ມາດຕາ 14 ການນໍາໃຊ້ທຶນ.**

(1) ກປສ ຈະໃຫ້ການສະໜັບສະໜູນດ້ານທຶນຮອນ ແກ່ໂຄງການ ແລະ ວຽກງານຕາມເນື້ອ ໃນ ແລະເງື່ອນໄຂທີ່ຈະໄດ້ກໍານົດໄວ້ໃນລະບຽບການຄຸ້ມຄອງຂອງ ກປສ;

(2) ກປສ ສາມາດສະໜັບສະໜູນທຶນຮອນຈໍານວນໜຶ່ງໃຫ້ແກ່ກອງທຶນຍ່ອຍ;

(3) ແຫລ່ງທຶນຂອງ ກປສ ຈະຖືກນໍາໃຊ້ເພື່ອສະໜອງທຶນ ໃຫ້ແກ່ການໃຊ້ຈ່າຍບໍລິຫານ ແລະ ການໃຊ້ຈ່າຍປະຈໍາຂອງກະຊວງ, ກົມ, ອົງການ ແລະ ອົງການພາກລັດ ແລະ ເອກະຊົນ ທີ່ໄດ້ຮັບການສະໜັບສະໜູນທຶນຮອນຈາກ ກປສ ກໍຕໍ່ເມື່ອຄ່າໃຊ້ຈ່າຍດັ່ງກ່າວ ຕິດພັນໂດຍກົງ ກັບການຈັດຕັ້ງປະຕິບັດວຽກງານທີ່ໄດ້ຮັບການສະໜັບສະໜູນຈາກ ກປສ.

**ມາດຕາ 15 ຜູ້ມີສິດຂໍທຶນ, ໂຄງການ ແລະ ວຽກງານ ທີ່ສາມາດໄດ້ຮັບທຶນຈາກ ກປສ.**

(1) ບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງຂອງລັດ ຫລື ສັງຄົມ ສາມາດຮ້ອງຂໍການສະໜັບ ສະໜູນດ້ານທຶນຮອນ ຈາກ ກປສ;

(2) ວຽກງານທີ່ສາມາດໄດ້ຮັບການສະໜັບສະໜູນນັ້ນ ຕ້ອງສອດຄ່ອງກັບດໍາລັດສະບັບນີ້;

(3) ກປສ ຈະບໍ່ໃຫ້ການຊ່ວຍເຫລືອບໍ່ວ່າໃນຮູບແບບໃດໆ ເຂົ້າໃນເປົ້າໝາຍການຫລຸດຜ່ອນຄວາມເສຍຫາຍ ຫລື ທົດແທນຄ່າເສຍຫາຍທີ່ເກີດຈາກຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການພັດທະນາຕ່າງໆ ນອກຈາກວ່າເປັນວຽກງານທີ່ມີສິດໄດ້ຮັບການສະໜັບສະໜູນຈາກ ກປສ.

**ມາດຕາ 16 ການຮ້ອງຂໍທຶນຮອນ ແລະ ການຕິດຕາມກວດກາໂຄງການ .**

(1) ຂັ້ນຕອນໃນການຍື່ນຄໍາຮ້ອງ, ການຕີລາຄາຄໍາຮ້ອງຂອງໂຄງການ ແລະ ການຕິດຕາມກວດກາໂຄງການ ຈະໄດ້ລະບຸລະອຽດຢູ່ໃນ ຄູ່ມືການຈັດຕັ້ງປະຕິບັດໂຄງການ;

(2) ກປສ ຕ້ອງຕິດຕາມຄວາມຄືບໜ້າ ການຈັດຕັ້ງປະຕິບັດທຸກວຽກງານ ທີ່ໄດ້ຮັບການຊ່ວຍເຫລືອຈາກ ກປສ.

## ໝວດທີ VI
## ກອງທຶນຍ່ອຍ

**ມາດຕາ 17 ກອງທຶນຍ່ອຍ.**

(1) ກອງທຶນຍ່ອຍ ແມ່ນກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອວຽກງານປົກປັກຮັກສາສິ່ງແວດລ້ອມ, ການຂຸດຄົ້ນ, ການນໍາໃຊ້ ແລະ ການຄຸ້ມຄອງ ຊັບພະຍາກອນ ທໍາມະຊາດ ແບບຍືນຍົງ ໃນຂະແໜງການ ຫລື ຂົງເຂດໃດໜຶ່ງ.

(2) ບັນດາກະຊວງ, ການຈັດຕັ້ງ ແລະ ນິຕິບຸກຄົນສາມາດສະເໜີສ້າງຕັ້ງກອງທຶນຍ່ອຍຂຶ້ນ. ການສະເໜີສ້າງຕັ້ງກອງທຶນຍ່ອຍດັ່ງກ່າວ ຕ້ອງໃຫ້ສາມາດປະຕິບັດໄດ້ຕາມເງື່ອນໄຂຂັ້ນຕໍ່າສຸດທາງດ້ານການຈັດຕັ້ງ, ການເງິນ ແລະ ການເຄື່ອນໄຫວວຽກງານ ຕາມທີ່ໄດ້ກໍານົດໄວ້ຢູ່ລະບຽບການຄຸ້ມຄອງ ກປສ;

(3). ກອງທຶນຍ່ອຍສາມາດສ້າງຕັ້ງລະບົບການຄຸ້ມຄອງບໍລິຫານຕົນເອງຂຶ້ນ ຫລື ໃຫ້ຫ້ອງການຂອງ ກປສ ເປັນຜູ້ດໍາເນີນງານ ແລະ ຄຸ້ມຄອງບໍລິຫານກອງທຶນຍ່ອຍ ຕາມການຕົກລົງລະຫວ່າງຜູ້ໃຫ້ທຶນ, ກປສ ແລະ ກອງທຶນຍ່ອຍ;

(4) ບໍ່ອະນຸຍາດໃຫ້ສ້າງຕັ້ງກອງທຶນ ເພື່ອການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນ ທໍາມະຊາດແບບຍືນຍົງໃດໆ ທີ່ບໍ່ຂຶ້ນກັບ ກປສ. ກອງທຶນຍ່ອຍຈະສາມາດສ້າງຕັ້ງຂຶ້ນໄດ້ ກໍ່ຕໍ່ເມື່ອກອງທຶນດັ່ງກ່າວຢູ່ພາຍໃຕ້ການຄຸ້ມຄອງຂອງ ກປສ ເທົ່ານັ້ນ.

## ໝວດທີ VII
## ການກວດສອບບັນຊີ ແລະ ການລາຍງານ

**ມາດຕາ 18 ການກວດສອບບັນຊີ.**

(1) ອົງການກວດສອບບັນຊີແຫ່ງລັດ ຕ້ອງກວດສອບບັນຊີ, ວຽກງານ ແລະ ການຄຸ້ມຄອງບໍລິຫານ ຂອງ ກປສ;

(2).ການກວດສອບວຽກງານການເງິນ ແລະ ການຄຸ້ມຄອງບໍລິຫານ ຂອງ ກປສ ຕ້ອງໄດ້ດໍາເນີນໃນທຸກໆປີ ແລະ ປະຕິບັດຕາມມາດຕະຖານກວດສອບບັນຊີທີ່ຖືກຮັບຮອງໃນລະດັບສາກົນ. ການດໍາເນີນການກວດສອບບັນຊີລະອຽດຈະກໍານົດໄວ້ໃນຄູ່ມືການເງິນຂອງ ກປສ.

**ມາດຕາ 19 ການລາຍງານ.**

ຫ້ອງການ ຕ້ອງເຮັດບົດລາຍງານວຽກງານການເງິນ ແລະ ການເຄື່ອນໄຫວວຽກງານປະຈໍາງວດໃຫ້ສໍາເລັດພາຍໃນ 30 ວັນ ຫລັງຈາກສິ້ນສຸດງວດດັ່ງກ່າວ ແລະ ບົດລາຍງານປະຈໍາປີ ໃຫ້ສໍາເລັດພາຍໃນ 3 ເດືອນ ຫລັງຈາກສິ້ນສຸດປີງົບປະມານດັ່ງກ່າວ ໂດຍໃຫ້ສອດຄ່ອງກັບຂໍ້ກໍານົດ

ທີ່ລະບຸໄວ້ຢູ່ໃນຄູ່ມືການຄຸ້ມຄອງບໍລິຫານຂອງ ກປສ, ບົດລາຍງານທຸກສະບັບ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ ກ່ອນຈະນໍາສົ່ງໃຫ້ລັດຖະບານ ສປປ ລາວ.

**ມາດຕາ 20 ການໂຄສະນາເຜີຍແຜ່ຂໍ້ມູນ.**

ກປສ ຕ້ອງຮັບປະກັນໃຫ້ມີການໂຄສະນາເຜີຍແຜ່ຂໍ້ມູນ ກ່ຽວກັບວຽກງານ ແລະ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ຕ່າງປະເທດ, ໂດຍສະເພາະການປະຊຸມປະຈໍາປີຂອງ ກປສ, ລາຍຊື່ໂຄງການ ແລະ ວຽກງານ ທີ່ໄດ້ຮັບການຊ່ວຍເຫລືອ ດ້ານການເງິນຈາກ ກປສ ແລະ ບົດລາຍງານວຽກງານການເງິນ ແລະ ການເຄື່ອນໄຫວວຽກງານປະຈໍາປີ, ພ້ອມດຽວ ກັນນັ້ນ ໃຫ້ເຜີຍແຜ່ ຂໍ້ມູນດັ່ງກ່າວເປັນພາສາລາວ ແລະ ພາສາອັງກິດ ຜ່ານທາງລະບົບເຕັກໂນໂລຊີດ້ານການສື່ສານຕາມຄວາມເໝາະສົມ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຍຸບເລີກ ກປສ.**

(1) ກປສ ອາດຈະຖືກຍຸບເລີກ, ປັບປຸງ ຫລື ໂຈະຕາມການສະເໜີຂອງສະພາບໍລິຫານຂອງ ກປສ. ການສະເໜີຍຸບເລີກ ຕ້ອງໄດ້ຮັບການລົງຄະແນນສຽງເຫັນດີ ຢ່າງເປັນເອກະພາບຈາກສະພາບໍລິຫານ ແລະ ຕ້ອງນໍາສະເໜີໃຫ້ນາຍົກລັດຖະມົນຕີ ພິຈາລະນາອະນຸມັດ;

(2) ກ່ອນການຍຸບເລີກ, ກປສ ຕ້ອງປະຕິບັດພັນທະຂອງຕົນຕໍ່ໂຄງການ ແລະ ວຽກງານ ທີ່ຕົນໄດ້ໃຫ້ການສະໜັບສະໜູນດ້ານການເງິນ, ພ້ອມທັງຈ່າຍໜີ້ສິນເງິນກູ້ ແລະ ໜີ້ສິນຕ່າງໆ ທີ່ຕົນຍັງຄ້າງຊໍາລະ, ຫລື ຊໍາລະສະສາງວຽກງານຂອງຕົນຕາມຂອບເຂດຄວາມສາມາດດ້ານການເງິນ ຂອງ ກປສ;

(3) ກ່ອນຈະຍຸບເລີກ, ກປສ ຕ້ອງແຈ້ງໃຫ້ກອງທຶນຍ່ອຍຊາບ, ຜູ້ໃຫ້ທຶນສາມາດຮ້ອງຂໍ ແລະ ທວງເອົາທຶນຮອນ ທີ່ຕົນໄດ້ປະກອບສ່ວນ ໃຫ້ແກ່ກອງທຶນ ທີ່ຍັງບໍ່ທັນໄດ້ຖືກນໍາໃຊ້ນັ້ນຄືນ.

**ມາດຕາ 22 ເຄື່ອງໝາຍ ແລະ ກາປະທັບຂອງ ກປສ.**

ກປສ ມີເຄື່ອງໝາຍ ແລະ ກາປະທັບເປັນຂອງຕົນເອງ.

**ມາດຕາ 23 ການຈັດຕັ້ງປະຕິບັດດໍາລັດ.**

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ບັນດາອົງການຈັດຕັ້ງ ແລະ ອໍານາດການປົກຄອງທ້ອງຖິ່ນ ມີໜ້າທີ່ຮັບຜິດຊອບ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ ຕາມສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 24. ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ